ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-------===000===-------

ຕລຊລ
ຕະຫຼາດຫຼັກຊັບລາວ
LAO SECURITIES EXCHANGE

ເລກທີ 062/ຕລຊລ

ນະຄອນຫຼວງວຽງຈັນ, ວັນທີ 11 MAR 2013

**ເຖິງ:** ບັນດານັກລົງທຶນ ແລະ ຜູ້ຖືຮຸ້ນບໍລິສັດຈົດທະບຽນ.

**ເລື່ອງ:** ການຄິດໄລ່ອາກອນເງິນປັນຜົນງວດ 6 ເດືອນທ້າຍປີ 2012 ຂອງບໍລິສັດຈົດທະບຽນໃນ ຕລຊລ.

- ອີງຕາມກົດໝາຍວ່າດ້ວຍ ສ່ວຍສາອາກອນ (ສະບັບປັບປຸງ), ເລກທີ 05/ສພຊ, ລົງວັນທີ 20 ທັນວາ 2011.
- ອີງຕາມແຈ້ງການຂອງກົມສ່ວຍສາອາກອນ ສະບັບເລກທີ 2587/ກງ.ກສອ, ລົງວັນທີ 22 ກຸມພາ 2013.

ຕລຊລ ຂໍເປັນກຽດແຈ້ງມາຍັງທ່ານຊາບກ່ຽວກັບການຄິດໄລ່ອາກອນເງິນປັນຜົນງວດ 6 ເດືອນທ້າຍປີ 2012 (01/07-31/12/2012) ຂອງບໍລິສັດຈົດທະບຽນໃນ ຕລຊລ ແມ່ນຍັງໃຫ້ປະຕິບັດຕາມ ກົດໝາຍວ່າດ້ວຍສ່ວຍສາອາກອນສະບັບເລກທີ 04/ສພຊ, ລົງວັນທີ 19 ພຶດສະພາ 2005, ໃນອັດຕາ 10% ຈົນໝົດປີການບັນຊີ 2012 (ອີງຕາມເອກະສານຄັດຕິດ). ສ່ວນການຍົກເວັ້ນອາກອນເງິນປັນຜົນຕາມມາດຕາ 46 ຂໍ້ 5 ຂອງກົດໝາຍວ່າດ້ວຍສ່ວຍສາອາກອນ ສະບັບເລກທີ 05/ສພຊ, ລົງວັນທີ 20 ທັນວາ 2011 ແມ່ນໃຫ້ເລີ່ມປະຕິບັດໄດ້ນັບແຕ່ປີການບັນຊີ 2013 ເປັນຕົ້ນໄປ.

ດັ່ງນັ້ນ, ຕລຊລ ຈຶ່ງແຈ້ງມາຍັງທ່ານເພື່ອຊາບໄວ້ເປັນຂໍ້ມູນ ດ້ວຍ.

ດ້ວຍຄວາມນັບຖື,

ປະທານຄະນະ,

ຫົວໜ້າໃຫຍ່ຜູ້ບໍລິຫານ

ບໍລິສັດ
ຕະຫຼາດຫຼັກຊັບລາວ ຈຳກັດ
Lao Securities Exchange
Co., Ltd
ນະຄອນຫລວງວຽງຈັນ

**ຮສ. ເດດພູວັງ ມູລຣັຕນ໌**